ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນາຖາວອນ

ສະຖາບັນການເມືອງ ແລະ ການປົກຄອງແຫ່ງຊາດ.

ຫ້ອງການ

ເລກທີ 222 /ຫກ.

ນະຄອນຫຼວງວຽງຈັນ, ວັນທີ 6 ກຸມພາ 2025

# ແຈ້ງການປະມູນ

**ເຖິງ:** ບໍລິສັດ ກໍ່ສ້າງສ້ອມແປງທົ່ວໄປ.

**ເລື່ອງ:** ເຊີນເຂົ້າຮ່ວມໂຄງການສ້ອມແປງອາຄານຫໍພັກ ມິດຕະພາບລາວ-ຫວຽດນາມ ຂອງສະຖາບັນການເມືອງ ແລະ ການປົກຄອງແຫ່ງຊາດ;

- ອີງຕາມ ກົດໝາຍວ່າດ້ວຍ ການຈັດຊື້-ຈັດຈ້າງດ້ວຍທຶນຂອງລັດ, ສະບັບເລກທີ 30/ສພຊ, ລົງວັນທີ **02 ພະຈິກ 2017**;
- ອີງຕາມແຜນງົບປະມານຂອງ ສະຖາບັນການເມືອງ ແລະ ການປົກຄອງແຫ່ງຊາດ ປະຈຳປີ 2025 ສະບັບເລກທີ 3368/ກຜທ.ກຜ4, ລົງວັນທີ 26 ທັນວາ 2024;
- ອີງຕາມ ຂໍ້ຕົກລົງ ວ່າດ້ວຍການແຕ່ງຕັ້ງຄະນະຮັບຜິດຊອບ ໂຄງການສ້ອມແປງອາຄານຫໍພັກ ມິດຕະພາບລາວ-ຫວຽດນາມ ຂອງສະຖາບັນການເມືອງ ແລະ ການປົກຄອງແຫ່ງຊາດ ສະບັບເລກທີ 73/ສມປຊ, ລົງວັນທີ 21 ມັງກອນ 2025.

ຫ້ອງການ ສະຖາບັນການເມືອງ ແລະ ການປົກຄອງແຫ່ງຊາດ ຂໍຖືເປັນກຽດແຈ້ງມາຍັງບັນດາບໍລິສັດ, ບຸກຄົນ, ນິຕິບຸກຄົນຮັບຊາບ ເພື່ອເຂົ້າຮ່ວມໃນການປະມູນໂຄງການສ້ອມແປງອາຄານຫໍພັກ ມິດຕະພາບລາວ-ຫວຽດນາມ ຂອງສະຖາບັນການເມືອງ ແລະ ການປົກຄອງແຫ່ງຊາດ; ເຊິ່ງປະກອບມີບັນດາມາດຖານເງື່ອນໄຂ ດັ່ງນີ້:

1. ການປະມູນນີ້ອະນຸຍາດໃຫ້ທຸກໆບໍລິສັດ ທີ່ມີຄຸນວຸດທິເໝາະສົມ, ມີໃບອະນຸຍາດດຳເນີນທຸລະກິດທີ່ຖືກຕ້ອງຕາມກົດໝາຍ ທີ່ກ່ຽວກັບການກໍ່ສ້າງທົ່ວໄປ.
2. ບໍລິສັດ ທີ່ມີຄຸນວຸດທິເໝາະສົມ ແລະ ມີຄວາມສົນໃຈສາມາດຕິດຕໍ່ພົວພັນໄດ້ທີ່ ຫ້ອງການສະຖາບັນການ ເມືອງ ແລະ ການປົກຄອງແຫ່ງຊາດ ພະແນກແຜນການ-ການເງິນ ຜູ້ຮັບຜິດຊອບຊື່: ນ. ລຸນນີ ໄໝທະວີເພັດ ເບີໂທ 020 55053102 ແລະ ນາງ ບຸນມີ ລໍວັນຄຳ ໃນໂມງລັດຖະການ.
3. ບໍລິສັດໃດທີ່ຕ້ອງການຊື້ຊອງປະມູນຕ້ອງມາຕິດຕໍ່ພົວພັນກັບພະແນກແຜນການ-ການເງິນ ຂອງ ສມປຊ ແມ່ນເລີ່ມຂາຍຊອງນັບແຕ່ 06 ກຸມພາ 2025 ເປັນຕົ້ນໄປ, ໃນລາຄາ 2,000,000 ກີບ (ສອງລ້ານກີບຕໍ່ໜຶ່ງຊອງ), ຈຳນວນເງິນດັ່ງກ່າວນີ້ຈະບໍ່ມີການສົ່ງຄືນ ແລະ ວິທີການຊຳລະຕ້ອງຈ່າຍເປັນເງິນສົດເທົ່ານັ້ນ.
4. ຊອງປະມູນຕ້ອງສົ່ງກ່ອນເວລາ 9:00 ໂມງ ຂອງວັນທີ 12 ມີນາ 2025 ທີ່ຫ້ອງການ ສະຖາບັນການ ເມືອງ ແລະ ການປົກຄອງແຫ່ງຊາດ ແລະ ຊອງປະມູນລາຄາທຸກໆຊອງຈະໄດ້ເປີດໃນເວລາ 09:30 ໂມງ ຂອງ ວັນທີ 12 ມີນາ 2025 ໂດຍຊ່ອງໜ້າຄະນະຮັບຜິດຊອບໂຄງການ ແລະ ຕົວແທນຂອງຜູ້ປະມູນທີ່ສົນໃຈ.

สแกนด้วย CamScanner

5. ທຸກໆຊອງປະມູນ ຕ້ອງໄດ້ມີໜັງສືຄໍ້າປະກັນການປະມູນດ້ວຍກຽດ ຫລື ຫນັງສືຄໍ້າປະກັນການປະມູນຈາກທະນາຄານ ຫລື ເງິນສົດ ຢ່າງໜ້ອຍບໍ່ໃຫ້ຫລຸດ 02% ຂອງລາຄາທີ່ສະເໜີເຂົ້າປະມູນ.

6. ສະຖານທີ່ຫ້ອງປະຊຸມຊັ້ນ II ຕຶກຫ້ອງການ ສະຖາບັນການເມືອງ ແລະ ການປົກຄອງແຫ່ງຊາດ ເບີໂທຕິດຕໍ່ 021 752001, 020 5505 3102 ຫລື 020 55564541.

ດັ່ງນັ້ນ, ຫ້ອງການສະຖາບັນການເມືອງ ແລະ ການປົກຄອງແຫ່ງຊາດ ຈຶ່ງຂໍແຈ້ງມາຍັງບັນດາບໍລິສັດຕ່າງໆເຂົ້າຮ່ວມການປະມູນຕາມວັນເວລາດ້ວຍ .

ເຊັນແທນຫົວໜ້າຫ້ອງການ

ບຸນໝາ ສີທາລາດ

สแกนด้วย CamScanner